# ຂໍ້ມູນສຳຄັນສຳລັບຄົນທີ່ຈະເປັນພໍ່ແມ່

## ການຕັດສິນໃຈໃນມື້ນີ້ມີຜົນກະທົບຕໍ່ອະນາຄົດຂອງລູກຂອງທ່ານ

ມີແຜນດີໆຫຼາຍແຜນທີ່ຕ້ອງເຮັດເມື່ອທ່ານກຳລັງຈະມີລູກ. ແຕ່ທ່ານຍັງຈະຕ້ອງປະເຊີນກັບການຕັດສິນໃຈທີ່ສຳຄັນຫຼາຍຢ່າງເຊັ່ນກັນ. ລູກຂອງທ່ານອາດຈະເກີດໃນໂຮງໝໍທີ່ໄດ້ຮັບອະນຸມັດໃຫ້ເຂົ້າຮ່ວມໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍ (NHSP). ໃນລະຫວ່າງທີ່ພັກຢູ່ໂຮງໝໍນັ້ນ ທ່ານຈະໄດ້ຮັບໂອກາດໃນການກວດຄັດກອງການໄດ້ຍິນຂອງແອນ້ອຍຂອງທ່ານກ່ອນອອກຈາກໂຮງໝໍ.

ເນື່ອງຈາກການສູນເສຍການໄດ້ຍິນອາດຈະບໍ່ສາມາດເບິ່ງເຫັນໄດ້ ການຕັດສິນໃຈຂອງທ່ານໃນການໃຫ້ແອນ້ອຍກວດຄັດກອງການໄດ້ຍິນແມ່ນສຳຄັນ. ໃນປັດຈຸບັນ ເຕັກໂນໂລຢີເຮັດໃຫ້ສາມາດກວດພົບການສູນເສຍການໄດ້ຍິນໃນຊ່ວງຕົ້ນໆຂອງຊີວິດຂອງແອນ້ອຍໄດ້.

ເດືອນແລະປີທຳອິດຂອງຊີວິດຂອງເດັກນ້ອຍແມ່ນມີຄວາມສຳຄັນຫຼາຍສຳລັບການພັດທະນາທັກສະການສື່ສານ. ແອນ້ອຍທີ່ສູນເສຍການໄດ້ຍິນ ຫຼືຫູໜວກ ອາດຈະມີບັນຫາໃນການພັດທະນາທັກສະທາງພາສາປົກກະຕິ ຫຼືອາດຈະຮຽນໄດ້ບໍ່ດີໃນໂຮງຮຽນ. ດັ່ງນັ້ນ ການກວດພົບຄວາມສູນເສຍແຕ່ເນີ່ນໆ ແລະການໃຫ້ບໍລິການພິເສດແກ່ແອນ້ອຍແລະຄອບຄົວຈຶ່ງເປັນສິ່ງສຳຄັນ.

ສະຖາບັນກຸມານເວດອາເມຣິກາ (American Academy of Pediatrics) ແລະ ອົງກອນວິຊາຊີບອື່ນໆ ແນະນຳໃຫ້ມີການກວດຄັດກອງການໄດ້ຍິນສຳລັບເດັກເກີດໃໝ່ທຸກຄົນ ແລະຊຸກຍູ້ໃຫ້ມີການຕິດຕາມການໄດ້ຍິນຂອງເດັກຢ່າງໃກ້ຊິດຕະຫຼອດຫຼາຍປີທຳອິດ.

## ມີແອນ້ອຍທີ່ສູນເສຍການໄດ້ຍິນຫຼາຍປານໃດ?

ການສູນເສຍການໄດ້ຍິນຂັ້ນຮຸນແຮງພົບໃນແອນ້ອຍປະມານ 2-4 ຄົນໃນ 1,000 ຄົນ. ປະມານ 50% ຂອງແອນ້ອຍທີ່ສູນເສຍການໄດ້ຍິນບໍ່ມີສັນຍານຫຼືປັດໃຈສ່ຽງ ເຊັ່ນ: ພະຍາດຮ້າຍແຮງ ຫຼື ປະຫວັດການເປັນຫູໜວກໃນຄອບຄົວ. ແອນ້ອຍບາງຄົນສູນເສຍການໄດ້ຍິນໃນພາຍຫຼັງຈາກການຕິດເຊື້ອຫູຊ້ຳແລ້ວຊ້ຳອີກ, ເຍື່ອຫຸ້ມສະໝອງອັກເສບ, ການບາດເຈັບທີ່ຫົວ ຫຼືອາການເຈັບປ່ວຍອື່ນໆ. ບາງຄັ້ງແອນ້ອຍສູນເສຍການໄດ້ຍິນໂດຍບໍ່ຮູ້ສາເຫດ.

## ພວກເຮົາກວດຄັດກອງການໄດ້ຍິນແນວໃດ?

ການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ສາມາດເຮັດໄດ້ກ່ອນທີ່ທ່ານແລະລູກຈະອອກຈາກໂຮງໝໍ. ການກວດຄັດກອງໃຊ້ເວລາພຽງແຕ່ສອງສາມນາທີໃນຂະນະທີ່ລູກຂອງທ່ານນອນຫຼັບ. ຈະເປີດສຽງຄ່ອຍໆຜ່ານຫູຟັງທີ່ຜະລິດຂຶ້ນມາສະເພາະສຳລັບແອນ້ອຍ. ການຕອບສະໜອງຂອງລູກທ່ານຕໍ່ກັບສຽງນັ້ນຈະຖືກວັດແທກໂດຍອັດຕະໂນມັດໂດຍການປ່ອຍສຽງສະທ້ອນຈາກໃນຫູ (OAE) ຫຼື ການກວດການໄດ້ຍິນຂອງເສັ້ນປະສາດການໄດ້ຍິນລະດັບກ້ານສະໝອງ (ABR). ທ່ານຈະໄດ້ຮັບຜົນກວດຄັດກອງກ່ອນທີ່ທ່ານຈະອອກຈາກໂຮງໝໍ.

ວິທີກວດຄັດກອງແບບງ່າຍໆໃນປັດຈຸບັນມີຄວາມໜ້າເຊື່ອຖືຫຼາຍ.
ການກວດແອນ້ອຍທີ່ສູນເສຍການໄດ້ຍິນມັກຈະບໍ່ພາດ.

## ໃຜເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດຄັດກອງການໄດ້ຍິນ?

ໂດຍທົ່ວໄປປະກັນໄພຈະຄຸ້ມຄອງຄ່າໃຊ້ຈ່າຍໃນການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່. Medi-Cal ຈະຮັບຜິດຊອບຄ່າໃຊ້ຈ່າຍໃນການກວດຄັດກອງແອນ້ອຍທີ່ເຂົ້າເກນ.

## ໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍແມ່ນຫຍັງ?

ພະແນກບໍລິການການດູແລສຸຂະພາບຂອງລັດຄາລິຟໍເນຍ (DHCS) ແລະບໍລິການທາງການແພດສໍາລັບເດັກ (CMS) ມີໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ທົ່ວລັດ.
ໂຄງການນີ້ຊ່ວຍລະບຸການສູນເສຍການໄດ້ຍິນໃນແອນ້ອຍ
ແລະສາມາດແນະນໍາຄອບຄົວໄປສູ່ການບໍລິການທີ່ເໝາະສົມທີ່ຈໍາເປັນເພື່ອຊ່ວຍພັດທະນາທັກສະການສື່ສານ.

ເປົ້າໝາຍຂອງໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍແມ່ນເພື່ອລະບຸແອນ້ອຍທີ່ສູນເສຍການໄດ້ຍິນ ແລະເຊື່ອມຕໍ່ເຂົາເຈົ້າໄປຫາບໍລິການຕ່າງໆພາຍໃນອາຍຸຫົກເດືອນ.
ໂຄງການນີ້ມີສູນປະສານງານການໄດ້ຍິນທີ່ເຮັດວຽກກັບຄອບຄົວ, ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບ ແລະໂຮງໝໍເພື່ອຮັບປະກັນວ່າເດັກນ້ອຍຈະໄດ້ຮັບການບໍລິການທີ່ຈໍາເປັນ.

ໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ເກັບກໍາຂໍ້ມູນກ່ຽວກັບການກວດຄັດກອງການໄດ້ຍິນຂອງລູກນ້ອຍຂອງທ່ານຕາມມາດຕາ 124119 ຂອງປະມວນກົດໝາຍສຸຂະພາບ ແລະຄວາມປອດໄພ.
ສູນປະສານງານການໄດ້ຍິນອາດຈະໃຊ້ຂໍ້ມູນນີ້ເພື່ອຊ່ວຍເຫຼືອທ່ານແລະແອນ້ອຍຂອງທ່ານໃນການໄດ້ຮັບບໍລິການທີ່ທ່ານອາດຈໍາເປັນ. ສູນປະສານງານການໄດ້ຍິນອາດຈະຕິດຕໍ່ທ່ານກ່ຽວກັບການບໍລິການຕິດຕາມຜົນ.

**ຖ້າທ່ານມີຄໍາຖາມ ຫຼືຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່,**

- ກະລຸນາໂທໄປທີ່ເບີໂທຟຣີ 1-877-388-5301
- ຫຼືເຂົ້າໄປເບິ່ງພວກເຮົາໃນເວັບໄຊທີ່ www.dhcs.ca.gov/services/nhsp